# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ
# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 1
## ຄວາມຮູ້ທົ່ວໄປກ່ຽວກັບການໂຄສະນາເຜີຍແຜ່ກົດໝາຍ
## Fundamental advertising regulations

### 1. ບົດບາດຂອງການໂຄສະນາເຜີຍແຜ່ກົດໝາຍ

ວຽກງານໂຄສະນາເຜີຍແຜ່ກົດໝາຍມີ 8 ບົດບາດທີ່ສຳຄັນຕົ້ນຕໍດັ່ງນີ້:

**1.1. ບົດບາດໃນການສ້າງສະຕິເຄົາລົບກົດໝາຍໃຫ້ແກ່ພົນລະເມືອງ.**

ການໂຄສະນາເຜີຍແຜ່ກົດໝາຍ ດ້ວຍຫຼາຍຮູບການ ແລະ ວິທີການທີ່ແຕກຕ່າງກັນເປັນການຍົກສູງຄວາມຮູ້ ແລະ ກະທົບໂດຍກົງໃສ່ສະຕິຂອງເປົ້າໝາຍ ຊຶ່ງກ່ອນອື່ນໝົດ ເຮັດໃຫ້ເປົ້າໝາຍເກີດຄວາມສົນໃຈຕໍ່ກົດໝາຍ. ຈາກການບໍ່ສົນໃຈຕໍ່ການດຳລົງຄົງຕົວຂອງກົດໝາຍ, ເປົ້າໝາຍໄດ້ຮັບການໂຄສະນາເຜີຍແຜ່, ສຶກສາອົບຮົມແລ້ວເລີ່ມໃຫ້ຄວາມສົນໃຈຕໍ່ກົດໝາຍ, ພ້ອມກັນນັ້ນຄວາມຮັບຮູ້ກ່ຽວກັບກົດໝາຍ ກໍນັບມື້ນັບໄດ້ຮັບການຍົກສູງຂຶ້ນ. ກົດໝາຍ ແມ່ນພາຫະນະທີ່ລັດນຳໃຊ້ເພື່ອຄຸ້ມຄອງເສດຖະກິດ-ສັງຄົມ ແລະ ກໍແມ່ນພາຫະນະທີ່ພົນລະເມືອງທຸກຄົນ ນຳໃຊ້ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນເປັນທຳຂອງຕົນ. ສະນັ້ນ, ການໂຄສະນາເຜີຍແຜ່ກົດໝາຍ ເປັນການຊ່ວຍໃຫ້ເປົ້າໝາຍຮັບຮູ້ໄດ້ເຖິງຄຸນຄ່າອັນສູງສົ່ງດັ່ງກ່າວຂອງກົດໝາຍ ແລະ ຮູ້ນຳໃຊ້ພາຫະນະນັ້ນເຂົ້າໃນການດຳລົງຊີວິດປະຈຳວັນຂອງຕົນ. ບົດບາດທີ່ສຳຄັນທີ່ສຸດຂອງການໂຄສະນາເຜີຍແຜ່ກົດໝາຍ ແມ່ນການສ້າງຄວາມເຊື່ອໝັ້ນຕໍ່ກົດໝາຍ. ເມື່ອມີຄວາມເຊື່ອໝັ້ນແລ້ວເປົ້າໝາຍຈະຮູ້ບັນຊາພຶດຕິກຳຕ່າງໆຂອງຕົນ ໃຫ້ຖືກກັບຂໍ້ກຳນົດຂອງກົດໝາຍ. ບໍ່ພຽງແຕ່ເທົ່ານັ້ນ, ເຂົາເຈົ້າຍັງມີສະຕິຕຳນິວິຈານບັນດາພຶດຕິກຳທີ່ເປັນການລະເມີດກົດໝາຍນຳອີກ.

**1.2. ບົດບາດໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ**

ເພື່ອເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມສອດຄ່ອງກັບກົນໄກເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ແລະ ການເຊື່ອມໂຍງສາກົນ, ພັກເຮົາມີແຜນນະໂຍບາຍດຳເນີນການສ້າງລັດ ແຫ່ງກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນເປັນກ້າວໆ, ທັງສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດຊາດ. ການສ້າງລັດແຫ່ງກົດໝາຍ ຕ້ອງຮັບປະກັນໃຫ້ຖືກທິດສັງຄົມນິຍົມ ແລະ ຕ້ອງຮັບປະກັນບົດບາດການນຳພາຂອງພັກ, ຮັບປະກັນຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ, ທັງເປັນການຜັນຂະຫຍາຍແນວທາງຂອງພັກໃຫ້ປາກົດຜົນເປັນຈິງ, ປົກປັກຮັກສາ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ.

ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ເວລາໃດກໍຕ້ອງໃຫ້ສອດຄ່ອງກັບກົດເກນການຂະຫຍາຍຕົວທາງດ້ານເສດຖະກິດ, ຮັບຮູ້ການຄົງຕົວ, ການຂະຫຍາຍຕົວ ຂອງເສດຖະກິດຫຼາຍພາກສ່ວນ ຊຶ່ງໃນນັ້ນ ຕ້ອງຍົກສູງບົດບາດເປັນເຈົ້ານຳພາທາງດ້ານເສດຖະກິດຂອງລັດ, ຂອງລວມໝູ່. ທຸກພາກສ່ວນເສດຖະກິດເຄື່ອນໄຫວຢ່າງມີຄວາມສະເໝີພາບ ຕໍ່ໜ້າກົດໝາຍ ໂດຍຖືເອົາຜົນປະໂຫຍດ ຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາ

ເຜົ່າເປັນກົກ. ການສ້າງລັດທີ່ປົກຄອງດ້ວຍກົດໝາຍແມ່ນເລັ່ງໃສ່ ເພື່ອປົດປ່ອຍຄວາມທຸກຍາກຂອງປະຊາຊົນ, ສ້າງເງື່ອນໄຂ ແລະ ກາລະໂອກາດໃຫ້ປະຊາຊົນມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ທຳມາຫາກິນທີ່ຖືກຕ້ອງຕາມກົດໝາຍ. ກົດໝາຍດຳລົງບົດບາດເປັນພາຫະນະຕົ້ນຕໍໃນໃນການດັດສົມເສດຖະກິດ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ຮັ່ງມີ, ເຂັ້ມແຂງເປັນກ້າວໆ.

ການສ້າງລັດທີ່ປົກຄອງດ້ວຍກົດໝາຍ, ເວລາໃດກໍຕ້ອງຄຳນຶງເຖິງສິດ, ເສລີພາບ, ຄວາມສະເໝີພາບຕໍ່ໜ້າກົດໝາຍ, ປະຊາທິປະໄຕ ແລະ ຄວາມຍຸຕິທຳໃນສັງຄົມ, ທັງເປັນການຈຳກັດ ແລະ ແກ້ໄຂຂໍ້ຂັດແຍ່ງໃນສັງຄົມດ້ວຍເນື້ອໃນພື້ນຖານດັ່ງນີ້: ສ້າງທຸກເງື່ອນໄຂ ເພື່ອໃຫ້ປະຊາຊົນ, ພົນລະເມືອງສາມາດປະຕິບັດສິດ ແລະ ພັນທະຂອງຕົນຢ່າງເຕັມສ່ວນ ຕາມທີ່ລັດຖະທຳມະນູນ ແລະ ກົດໝາຍໄດ້ກຳນົດ; ທຸກການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການລັດ ຕ້ອງບົນພື້ນຖານຮັບປະກັນຄວາມສະເໝີພາບຕໍ່ໜ້າກົດໝາຍ; ລັດມີມາດຕະການທີ່ສັກສິດ ເພື່ອສະກັດກັ້ນການລະເມີດກົດ ໝາຍ ຂອງພົນລະເມືອງ, ທັງຍົກສູງຄວາມສັກສິດ ຂອງກົດໝາຍ, ສ້າງສະຕິກົດໝາຍ ແລະ ປະຕິບັດກົດໝາຍຢ່າງກວ້າງຂວາງໃນທົ່ວສັງຄົມ; ສ້າງ ແລະ ປັບປຸງກົດໝາຍໃຫ້ນັບມື້ນັບເປັນລະບົບຄົບຊຸດ ແລະ ບໍລິບູນຍິ່ງຂຶ້ນ ໂດຍຫັນເອົາຄວາມມຸ່ງມາດປາດຖະໜາ ຂອງປະຊາຊົນລາວບັນດາເຜົ່າ, ສ້າງເງື່ອນໄຂໃຫ້ປະຊາຊົນ ມີສ່ວນຮ່ວມຫຼາຍຂຶ້ນໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ.

**1.3. ບົດບາດໃນການໂຄສະນາເຜີຍແຜ່ກົດໝາຍແມ່ນພາກສ່ວນໜຶ່ງຂອງການສຶກສາອົບຮົມການເມືອງ-ແນວຄິດ.**

ທ່ານ ວ.ອ. ເລນິນ ໄດ້ເນັ້ນໜັກວ່າ “ກົດໝາຍ ແມ່ນມາດຕະການທາງການເມືອງ, ແມ່ນການເມືອງ ແລະ ການໂຄສະນາເຜີຍແຜ່ກົດໝາຍ ກໍແມ່ນການໂຄສະນາເຜີຍແຜ່, ສຶກສາອົບຮົມການເມືອງເຮັດໃຫ້ເປົ້າໝາຍທີ່ຖືກໂຄສະນາເຜີຍແຜ່, ສຶກສາອົບຮົມມີຄວາມຮັບຮູ້ທີ່ແນ່ນອນກ່ຽວກັບການເມືອງ”. ແນວທາງການເມືອງຂອງພັກເຮົາເປັນບ່ອນອີງໃຫ້ແກ່ພາລະກິດປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການໄດ້ແຊກຊຶມເຂົ້າໃນທຸກຂັ້ນຕອນຂອງການສ້າງກົດໝາຍ, ເປັນທິດຊີ້ນຳຕໍ່ເນື້ອໃນທັງໝົດຂອງກົດໝາຍ ແລະ ສາມາດເວົ້າໄດ້ວ່າ ສະຕິກົດໝາຍ ແມ່ນພາກສ່ວນໜຶ່ງຂອງສະຕິການເມືອງ.

**1.4. ບົດບາດໃນການດັດປັບຄຸນສົມບັດ.**

ແມ່ນບັນດາມາດຕະຖານ, ຫຼັກການຂອງການປະພຶດທີ່ສັງຄົມຮັບຮູ້, ກຳນົດພຶດຕິກຳ, ສາຍພົວພັນລະຫວ່າງຄົນກັບຄົນດ້ວຍກັນຢູ່ໃນສັງຄົມ. ກົດໝາຍ ເປັນບ່ອນອີງ ແລະ ເປັນພື້ນຖານໃຫ້ແກ່ການກຳເນີດຄຸນສົມບັດໃໝ່, ບັນດາຫຼັກການຕົ້ນຕໍຂອງຄຸນສົມບັດໃໝ່ ໄດ້ຖືກຜັນຂະຫຍາຍເປັນຂໍ້ກຳນົດຂອງກົດໝາຍ. ເພາະສະນັ້ນ, ກົດໝາຍຈຶ່ງປົກປ້ອງ ແລະ ເສີມຂະຫຍາຍຄຸນສົມບັດ, ປົກປ້ອງຄວາມຍຸຕິທຳ, ຄວາມມີມະນຸດສະທຳ, ສິດເສລີພາບ, ຄວາມເຊື່ອໝັ້ນ ແລະ ຈັນຍາທຳ. ການສຶກສາອົບຮົມຄຸນສົມບັດ ຈະເຮັດໃຫ້ພົນລະເມືອງເກີດມີການເຄົາລົບກົດໝາຍຢ່າງເລິກເຊິ່ງ ແລະ ກົງກັນຂ້າມ ການໂຄສະນາເຜີຍແຜ່ກົດໝາຍ ກໍຈະເຮັດໃຫ້ຄົນຮູ້ຈັກເຄົາລົບ, ປະຕິບັດຫຼັກການຂອງຄຸນສົມບັດ, ເປັນການບູລະນະພັນທະຕ່າງໆແລະທາງຄຸນສົມບັດ.

**1.5. ບົດບາດໃນການໂຄສະນາເຜີຍແຜ່ກົດໝາຍ ໃຫ້ແກ່ພະນັກງານ-ລັດຖະກອນ, ສະມາຊິກພັກ, ທະຫານ, ຕຳຫຼວດ ແລະ ປະຊາຊົນໃນການຈັດຕັ້ງປະຕິບັດກົດໝາຍ.**

ການໂຄສະນາເຜີຍແຜ່ກົດໝາຍ ແມ່ນຂັ້ນຕອນທຳອິດ ຂອງການຜັນຂະຫຍາຍຈັດຕັ້ງປະຕິບັດກົດໝາຍ ການເພີ່ມທະວີນິຕິທຳ, ການເປີດກວ້າງ ແລະ ບູລະນະປະຊາທິປະໄຕ ປະຊາຊົນຈະບໍ່ມີຄວາມ ໝາຍຖ້າຫາກວ່າວຽກງານໂຄສະນາເຜີຍແຜ່ ກົດໝາຍໃຫ້ແກ່ພະນັກງານ- ລັດຖະກອນ, ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບໍ່ໄດ້ຮັບການປະຕິບັດຢ່າງຮອບດ້ານ ແລະ ມີປະສິດທິພາບ. ບັນຫາການເຄົາລົບ ແລະ ປະຕິບັດກົດໝາຍ

ແມ່ນຂຶ້ນກັບຫຼາຍປັດໄຈທີ່ແຕກຕ່າງກັນ, ໃນນັ້ນ ສະຕິກົດໝາຍ ແລະ ວັດທະນະທຳກົດ ໝາຍເປັນປັດໄຈສຳຄັນທີ່ສຸດ. ກົດໝາຍຈະກາຍເປັນເຄື່ອງມືທີ່ໃຫ້ປະ ໂຫຍດໃນການດັດປັບສາຍພົວພັນສັງຄົມ ກໍຕໍ່ເມື່ອຄວາມຮຽກຮ້ອງຕ້ອງການຂອງມັນຕໍ່ສັງຄົມ ໄດ້ຖືກຮັບຮູ້, ຖືກຈັດຕັ້ງປະຕິບັດ ແລະ ໃນເມື່ອພັນທະໃນການປະຕິບັດຂໍ້ກຳນົດຂອງກົດໝາຍ ໄດ້ກາຍເປັນຄວາມຕ້ອງການພາວະວິໄສ, ເປັນສະຕິຕື່ນຕົວ ຂອງພົນລະ ເມືອງທຸກຄົນຢ່າງແທ້ຈິງ. ສະນັ້ນ, ສາມາດເວົ້າໄດ້ວ່າ ສະຕິກົດໝາຍຄືກັນກັບແນວຄິດຊີ້ນຳໃຫ້ແກ່ການບູລະນະ ແລະ ເສີມຂະຫຍາຍນິຕິທຳ.

ໃນຕົວຈິງ ການປະຕິບັດກົດໝາຍ ບໍ່ແມ່ນວ່າເວລາໃດກໍກາຍເປັນສະຕິຕື່ນຕົວຂອງໝົດທຸກຄົນ, ເພາະສະນັ້ນ ບົດບາດຂອງການໂຄສະນາເຜີຍແຜ່ກົດໝາຍ ໃນເງື່ອນໄຂປະຈຸບັນ ແມ່ນເຮັດໃຫ້ພົນລະເມືອງແຕ່ລະຄົນເກີດມີສະຕິກົດໝາຍ, ປະກອບສ່ວນຊ່ວຍໃຫ້ແຕ່ລະຄົນຮັບຮູ້ເຖິງ ລັກສະນະຍຸຕິທຳຂອງກົດໝາຍ, ປະຕິບັດກົດໝາຍ ບົນພື້ນຖານຄວາມຕື່ນຕົວສະໝັກໃຈ ໂດຍເລີ່ມຈາກຄວາມຮຽກຮ້ອງຕ້ອງການຂອງແຕ່ລະຄົນ, ຫາກບໍ່ແມ່ນຍ້ອນຢ້ານການຖືກລົງໂທດຕາມກົດໝາຍ. ການເຄົາລົບນິຕິທຳ ສ່ວນໜຶ່ງຍັງແມ່ນຂຶ້ນກັບລະດັບວັດທະນະທຳກົດໝາຍ ຫຼືຮີດຄອງປະເພນີຂອງປະຊາຊົນ. ລະດັບວັດທະນະທຳກົດໝາຍບໍ່ພຽງແຕ່ສ່ອງແສງເຖິງຄວາມຮັບຮູ້, ຄວາມເຂົ້າໃຈບັນດາຂໍ້ກຳນົດຂອງກົດໝາຍຢ່າງສັງລວມ, ທີ່ຈຳເປັນໃຫ້ແກ່ແຕ່ລະຄົນ ແລະ ຕິດພັນກັບພັນທະຕ່າງໆຂອງເຂົາເຈົ້າເທົ່ານັ້ນ ແຕ່ຍັງໝາຍເຖິງການຮັບຮູ້, ຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ຄວາມໝາຍ, ຄວາມສຳຄັນຂອງກົດໝາຍຢູ່ໃນຊີວິດສັງຄົມ, ການເຄົາລົບກົດໝາຍ ແລະ ການຮູ້ໝູນໃຊ້ກົດໝາຍຢ່າງຖືກຕ້ອງ.

**1.6. ບົດບາດໃນການຕອບສະໜອງຂໍ້ມູນຂ່າວສານ, ສ້າງຄັງທິດສະດີ**

ການໂຄສະນາເຜີຍແຜ່ກົດໝາຍເປັນການພັດທະນາ ແລະ ປົກປ້ອງລັດທິມາກ-ເລນິນ, ໝູນໃຊ້ທິດສະດີ-ມາກເລນິນຢ່າງມີຫົວຄິດປະດິດສ້າງເຂົ້າໃນພຶດຕິກຳ ເພື່ອເພີ່ມເຕີມໃຫ້ທິດສະດີ, ເປັນບົດຮຽນໃຫ້ແກ່ການປະຕິວັດຂອງແຕ່ລະປະເທດ,  ວຽກງານແນວຄິດເປັນກົກ ເພື່ອເຮັດໃຫ້ທິດສະດີຂະຫຍາຍຕົວ ແລະ ອຸດົມສົມບູນຂຶ້ນເປັນກ້າວໆ. ສະໜອງເອກະສານກ່ຽວກັບການເມືອງ, ກົດໝາຍ, ເສດຖະກິດ-ສັງຄົມ, ວັດທະນະທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພົວພັນຮ່ວມມືກັບສາກົນ ແລະ ສະພາບການຂອງໂລກໃຫ້ລົງເຖິງເປົ້າໝາຍຕ່າງໆຢ່າງວ່ອງໄວ ແລະ ທົ່ວເຖິງ.

**1.7. ບົດບາດໃນການສ້າງຄວາມຮັບຮູ້ທາງດ້ານວິທະຍາສາດ**

ການໂຄສສະນາເຜີຍແຜ່ກົດໝາຍມີບົດບາດໃນການສ້າງຄວາມຮັບຮູ້ທາງດ້ານວິທະຍາສາດ ແມ່ນການດຳເນີນການສຶກສາອົບຮົມຄວາມຮູ້ພື້ນຖານທາງດ້ານວິທະຍາສາດ ເປັນຕົ້ນແມ່ນວິທະຍາສາດກົດໝາຍ ແລະ ວິທະຍາສາດອື່ນໃຫ້ທຸກຄົນ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິທະຍາສາດເພື່ອກະຕຸກຊຸກຍູ້ ແລະ ສົ່ງເສີມຫົວຄິດປະດິດສ້າງ, ມີຄວາມກະຕືລືລົ້ນ ແລະ ເປັນເຈົ້າການໃນການປະຕິບັດກົດໝາຍ.

**1.8. ບົດບາດໃນການຕຳນິວິຈານ, ເຮັດໜ້າທີ່ປົກປ້ອງແນວທາງຂອງພັກ**

ການໂຄສະນາເຜີຍແຜ່ກົດໝາຍຍັງມີບົດບາດ ໃນການປະກອບສ່ວນຕຳນິວິຈານແນວຄິດທີ່ເປັນປໍລະປັກຕໍ່ລັດທິມາກ-ເລນິນ ແລະ ແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ຕຳນິວິຈານການປະພຶດ, ແນວຄິດຫຼ້າຫຼັງ ທີ່ຝືນກັບການປະຕິວັດ, ຝືນກັບວິທະຍາສາດ ແລະ ສັງຄົມ.

**2.  ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍ**

**2.1. ການໂຄສະນາກົດໝາຍ**

ການໂຄສະນາກົດໝາຍ ແມ່ນການກະຈາຍຂໍ້ມູນຂ່າວສານ ກ່ຽວກັບກົດໝາຍຢ່າງກວ້າງຂວາງໂດຍ ບໍ່ຈໍາກັດຂອບເຂດ, ບໍ່ຈໍາກັດຜູ້ເຂົ້າຮ່ວມ ຂອງສາຍພົວພັນກົດໝາຍ, ໝາຍຄວາມວ່າພົນລະເມືອງທຸກຄົນສາມາດເຂົ້າຮ່ວມໄດ້.

ການໂຄສະນາກົດໝາຍແມ່ນການສື່ງຂໍ້ມູນຂ່າວສານຢ່າງຮອບດ້ານ, ກວມລວມກ່ຽວກັບກົດໝາຍ ແລະ ລະບຽບການທີ່ໄດ້ນໍາໃຊ້. ຂໍ້ມູນຂ່າວສານກ່ຽວກັບການຮັບຮອງເອົາ ແລະ ການປະກາດໃຊ້ກົດໝາຍ, ການສື່ງຂໍ້ມູນກົດໝາຍຈະບໍ່ແນໃສ່ເປົ້າໝາຍໃດໜຶ່ງທີ່ແນ່ນອນເທົ່ານັ້ນ, ແຕ່ຫາກແນໃສ່ທົ່ວສັງຄົມ.

ການສື່ງຂໍ້ມູນຂ່າວສານກ່ຽວກັບກົດໝາຍນັ້ນໃນບາງກໍລະນີບໍ່ສະເພາະແຕ່ເຮັດໃຫ້ປະຊາຊົນພາຍໃນປະເທດຮັບຮູ້ເທົ່ານັ້ນ, ແຕ່ຕ້ອງເຮັດໃຫ້ຄົນຕ່າງປະເທດທີ່ມີຄວາມສົນໃຈນໍາກົດໝາຍຂອງປະເທດເຮົາໃຫ້ຮັບຮູ້ນໍາອີກດ້ວຍ.

ການໂຄສະນາກົດໝາຍ ໃນກໍລະນີໃດໜຶ່ງມີຄວາມໝາຍຄຽງກັນກັບການເຜີຍແຜ່ກົດໝາຍ. ການທີ່ມີຄວາມໝາຍຄືກັນນັ້ນໄດ້ສະແດງອອກຢູ່ບ່ອນວ່າ ທັງສອງຢ່າງນີ້ລ້ວນແຕ່ແມ່ນການກະຈາຍຂໍ້ມູນຂ່າວສານກົດໝາຍ, ຕອບສະ ໜອງຂໍ້ມູນ ຂ່າວສານກົດໝາຍ ຕາມຄວາມຮຽກຮ້ອງຕ້ອງການຂອງພົນລະເມືອງ, ຂອງກຸ່ມຄົນໃນສັງຄົມ. ແຕ່ເຖິງຢ່າງໃດກໍຕາມ, ຈໍາຕ້ອງໄດ້ເວົ້າເຖິງຄວາມແຕກຕ່າງກັນລະຫ່ວາງ ການໂຄສະນາກົດໝາຍ ແລະ ການເຜີຍແຜ່ກົດໝາຍ.

**2.2. ການເຜີຍແຜ່ກົດໝາຍ**

ການເຜີຍແຜ່ກົດໝາຍ ແມ່ນການກະຈາຍຂໍ້ມູນຂ່າວສານທາງດ້ານກົດໝາຍ, ແຕ່ເປັນການກະຈາຍຂໍ້ມູນຂ່າວສານທາງດ້ານກົດໝາຍຢ່າງລະອຽດກວ່າ ເນື່ອງຈາກໄດ້ມີການກໍານົດທິດທາງ, ຈຸດປະສົງ, ມີການກໍານົດເປົ້າໝາຍຢ່າງຈະແຈ້ງກວ່າ. ມາດຕະຖານເພື່ອຕີລາຄາກ່ຽວກັບການກໍານົດເປົ້າໝາຍ ໄດ້ສະແດງອອກຢູ່ບ່ອນວ່າ ເປົ້າໝາຍນັ້ນຕ້ອງແມ່ນຜູ້ທີ່ຈະຕ້ອງກໍາແໜ້ນເນື້ອໃນກົດໝາຍ ເພາະວ່າການກໍາແໜ້ນ ແມ່ນຄວາມຮຽກຮ້ອງຕ້ອງການຕົວຈິງ ແລະ ມີຄວາມຈໍາເປັນສໍາລັບເປົ້າໝາຍນັ້ນ. ການໂຄສະນາ ແລະ ການເຜີຍແຜ່ກົດໝາຍ ລ້ວນແຕ່ມີຈຸດໝາຍ ເພື່ອເຮັດໃຫ້ກົດໝາຍເຂົ້າສູ່ຊີວິດຕົວຈິງຢ່າງມີໝາກມີຜົນ. ດັ່ງນັ້ນ, ທັງສອງອັນລ້ວນແຕ່ນອນຢູ່ໃນຄວາມເປັນເອກະພາບ ທີ່ມີສາຍພົວພັນຢ່າງສະໜິດແໜ້ນນໍາກັນ, ອາໄສ ແລະ ສ້າງເງື່ອນໄຂຄົງຕົວຊຶ່ງກັນ ແລະ ກັນ, ຊ່ວຍໜູນຊຶ່ງກັນ ແລະ ກັນ.

ເຖິງແມ່ນວ່າ ການໂຄສະນາກົດໝາຍ ແລະ ການເຜີຍແຜ່ກົດໝາຍມີຄວາມແຕກຕ່າງກັນໃນລະດັບໃດໜຶ່ງກໍຕາມ, ແຕ່ທັງສອງກໍລ້ວນແຕ່ມີສາຍພົວພັນຢ່າງສະໜິດແໜ້ນນໍາກັນ, ອາໄສ ແລະ ສ້າງເງື່ອນໄຂຊ່ວຍໜູນຊຶ່ງກັນ ແລະ ກັນ, ລ້ວນແຕ່ມີໜ້າທີ່ຮັບໃຊ້ໃຫ້ແກ່ການນໍາເອົາກົດໝາຍເຂົ້າສູ່ຊີວິດຕົວຈິງ ເພື່ອສ້າງສະຕິເຄົາລົບກົດໝາຍ ແລະ ແບບແຜນດໍາລົງຊີວິດຕາມກົດໝາຍ.

ສັງລວມແລ້ວ, ວຽກງານໂຄສະນາເຜີຍແຜ່ກົດໝາຍ ແມ່ນວຽກງານໜຶ່ງທີ່ສໍາຄັນຂອງທຸກຂະແໜງການຂອງລັດເວົ້າລວມ, ເປັນວຽກງານຕົ້ນຕໍຂອງຂະແໜງການຍຸຕິທໍາເວົ້າສະເພາະ. ການໂຄສະນາເຜີຍແຜ່ກົດໝາຍ ແມ່ນຮູບການໜຶ່ງໃນການຊີ້ແຈງອະທິບາຍ ເນື້ອໃນຂອງກົດໝາຍໃຫ້ປະຊາຊົນທຸກຊັ້ນຄົນ ແລະ ເຜົ່າຕ່າງໆ ໃນຂອບເຂດທົ່ວປະເທດເວົ້າລວມ, ແມ່ນການຊີ້ແຈງອະທິບາຍ, ແນະນໍາຈິດໃຈຂອງກົດໝາຍໃຫ້ແກ່ເປົ້າໝາຍໃດໜຶ່ງທີ່ແນ່ນອນເວົ້າສະເພາະ.

**3. ຄວາມສໍາຄັນຂອງການໂຄສນາເຜີຍແຜ່ກົດໝາຍ**

ເລີ່ມແຕ່ຊຸມປີ 1989-1990 ມາເຖິງປະຈຸບັນລັດຂອງພວກເຮົາໄດ້ຫັນເອົາແນວທາງນະໂຍບາຍປ່ຽນແປງໃໝ່ຂອງພັກມາເປັນລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການຕ່າງໆ ເປັນຈໍານວນຫຼວງຫຼາຍສົມຄວນ ເພື່ອເປັນ

ເຄື່ອງມືນຳໃຊ້ເຂົ້າການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ. ແຕ່ແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກ, ລັດຖະທຳມະນູນ , ກົດໝາຍ ແລະ ລະບຽບການຂອງລັດເຖິງວ່າຈະດີ, ຈະຖືກຕ້ອງ ແລະ ສອດຄ່ອງປານໃດກໍຕາມ ກໍຈະເປັນພຽງເອກະສານທີ່ບໍ່ມີຄຸນຄ່າ, ບໍ່ມີຄວາມໝາຍສຳຄັນຫຍັງ ຖ້າວ່າບັນດາເອກະສານເຫຼົ່ານັ້ນຫາກບໍ່ໄດ້ຖືກນຳໄປໂຄສະນາ, ບໍ່ນຳໄປເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ,  ທົ່ວເຖິງ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ແລະ ມີປະສິດທິພາບ. ສະນັ້ນ, ການເອົາໃຈໃສ່ໂຄສະນາ ເຜີຍແຜ່ ເພື່ອສ້າງສະຕິເຄົາລົບກົດໝາຍ ຈຶ່ງເປັນຄວາມຮຽກຮ້ອງຕ້ອງການພາວະວິໄສຂອງໜ້າທີ່ການເມືອງໃນໄລຍະໃໝ່ຢູ່ປະເທດເຮົາ.

ໃນໄລຍະຜ່ານມາການໂຄສະນາເຜີຍແຜ່, ສຶກສາອົບຮົມ, ການປະຕິບັດ ແລະ ການກວດກາການຈັດຕັ້ງປະຕິບັດກົດໝາຍ ແມ່ນໄດ້ຮັບການເອົາໃຈໃສ່ຈາກບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນໄດ້ດີສົມຄວນ ຈຶ່ງເຮັດໃຫ້ຄວາມຮັບຮູ້ຂອງປະຊາຊົນ ກ່ຽວກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆກໍນັບມື້ນັບສູງຂຶ້ນ. ສະຕິເຄົາລົບກົດໝາຍໄດ້ຮັບການເຊີດຊູໃຫ້ສູງຂຶ້ນເປັນກ້າວໆ ອັນເປັນການປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ແລະ ເປັນລະບຽບຮຽບຮ້ອຍ ເພື່ອສ້າງພື້ນຖານທີ່ແໜ້ນໜາໃຫ້ແກ່ການສ້າງລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ.

**ສັງລວມແລ້ວ, ການໂຄສະນາເຜີຍແຜ່ກົດໝາຍມີຄວາມສຳຄັນດັ່ງນີ້:**

**1) ຄວາມສຳຄັນທາງດ້ານການເມືອງ**

ຢູ່ໃນລະບອບການເມືອງ ກ່ອນອື່ນໝົດໄດ້ເວົ້າເຖິງ ຄວາມເປັນເອ ກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະ ຄວາມເປັນເອກະພາບຂອງຊາດ, ມັນແມ່ນບັນຫາພື້ນຖານກວ່າໝູ່, ແມ່ນໝາກຜົນອັນໃຫຍ່ຫຼວງ ທີ່ປະຊາຊົນເຮົາຍາດມາໄດ້ດ້ວຍຄວາມເສຍສະລະເລືອດເນື້ອໃນພາ ລະກິດຕໍ່ສູ້ກູ້ຊາດ ຢ່າງລຳບາກຍາວນານ, ມັນແມ່ນອົງປະກອບຂອງລັດໜຶ່ງທີ່ເປັນເອກະລາດ ຊຶ່ງບັນຫານີ້ລັດແຫ່ງ ສປປ ລາວໄດ້ສົ່ງເສີມຄວາມສະເໝີພາບຂອງພົນລະເມືອງ ທາງດ້ານການເມືອງ ແລະ ສັງຄົມຊຶ່ງສະແດງອອກຢູ່ບ່ອນວ່າ ພົນລະເມືອງລາວ ໂດຍບໍ່ຈຳແນກຍິງ-ຊາຍ, ຖານະທາງສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ມີສິດ ມີສຽງເທົ່າທຽມກັນ ທາງດ້ານການເມືອງ, ພົນລະເມືອງລາວທີ່ມີອາຍຸແຕ່ 18 ປີຂຶ້ນໄປມີສິດເລືອກຕັ້ງ ແລະ ຜູ້ທີມີອາຍຸແຕ່ 21 ປີຂຶ້ນໄປມີສິດສະໝັກຮັບເລືອກຕັ້ງ,  ມີສິດເຂົ້າຮ່ວມໃນການເຄື່ອນໄຫວວຽກງານ, ປຶກສາຫາລື ແລະ ຕົກລົງບັນຫາສຳຄັນຂອງຊາດ. ລັດເປັນຜູ້ປົກປ້ອງອິດສະລະພາບ ແລະ ສິດປະຊາທິປະໄຕ ຂອງປະຊາຊົນ ທີ່ບໍ່ມີໃຜຈະລ່ວງລະເມີດໄດ້. ທຸກອົງການ ແລະ ພະນັກງານຂອງລັດ ຕ້ອງເຮັດວຽກງານໂຄສະນາອົບຮົມບັນດາແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດໃຫ້ປະຊາຊົນ ແລະ ພ້ອມກັນຈັດຕັ້ງປະຕິບັດ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

ວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະ ການຈັດຕັ້ງປະຕິບັດກົດໝາຍ ເປັນວຽກງານທີ່ຫຍຸ້ງຍາກສັບສົນ ແລະ ກໍບໍ່ແມ່ນຜູ້ໃດຜູ້ໜຶ່ງ ຫຼື ອົງການຈັດຕັ້ງໃດໜຶ່ງເຮັດໄດ້ພຽງຜູ້ດຽວ, ມັນແມ່ນວຽກງານຂອງໝົດທຸກຄົນ ແລະ ທຸກອົງການຈັດຕັ້ງທັງພາກລັດ ແລະ ສັງຄົມ ຕ້ອງມີສ່ວນຮ່ວມ ທັງໃຫ້ການຮ່ວມໄມ້ຮ່ວມມື ແລະ ອຳນວຍຄວາມສະດວກໃນທຸກດ້ານ, ທຸກເງື່ອນໄຂ ຈຶ່ງຈະເຮັດໃຫ້ວຽກງານມີປະສິດທິພາບສູງ. ຖ້າວ່າທຸກຄົນ, ທຸກອົງການຈັດຕັ້ງຫາກບໍ່ເຫັນພາລະບົດບາດ ແລະ ຄວາມສຳຄັນຂອງວຽກງານໂຄສະນາເຜີຍແຜ່ກົດໝາຍແລ້ວ ກໍຈະເຮັດໃຫ້ວຽກງານດັ່ງກ່າວ ບໍ່ໄປຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ໄດ້ກຳນົດໄວ້ ກໍຄືເຮັດໃຫ້ແນວທາງ-ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດວາງອອກບໍ່ໄດຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ  ເພາະວ່າໜ້າທີ່ການເມືອງອັນຕົ້ນຕໍ ຂອງວຽກງານໂຄສະນາເຜີຍແຜ່ສ້າງສະຕິເຄົາລົບກົດໝາຍໃຫ້ແກ່ປະຊາຊົນລາວບັນດາເຜົ່າເນື້ອແທ້ແມ່ນ

ການນຳເອົາແນວທາງນະໂຍບາຍຂອງພັກໄປໂຄສະນາ, ໄປເຜີຍແຜ່ໃຫ້ປະຊາຊົນເຂົ້າໃຈ ແລະ ເຫັນດີເຫັນພ້ອມແລ້ວ ພາໃຫ້ມີຄວາມຕື່ນຕົວສູງໃນການເຄົາລົບ ແລະ ປະຕິບັດກົດໝາຍຢ່າງຖືກຕ້ອງ ຈຶ່ງຈະປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີຄວາມເຂັ້ມແຂງ ແລະ ຈະເລີນກ້າວໜ້າ, ປະຕິບັດສິດ ແລະ ພັນທະຂອງພົນລະເມືອງໄດ້ຢ່າງເຕັມສ່ວນ.

**2) ຄວາມສຳຄັນທາງດ້ານການປົກຄອງ**

ໃນເງື່ອນໄຂຂອງ ສປປ ລາວທີ່ດຳເນີນການປົກຄອງຕາມຫຼັກການອຳນາດເອກະພາບ, ແຕ່ມີການແບ່ງງານ ແບ່ງຄວາມຮັບຜິດຊອບ ລະຫວ່າງອົງການອຳນາດລັດດ້ວຍກັນ, ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆ ແມ່ນຮັບຜິດຊອບໂດຍອົງການບໍລິຫານ. ບັນຫາການເພີ່ມທະວີຄວາມສັກສິດ ຂອງການຈັດຕັ້ງປະຕິບັດກົດໝາຍ ຫຼື ຄຸນນະພາບໃນການປະຕິບັດກົດໝາຍ ແມ່ນບັນຫາພື້ນ ຖານ ແລະ ມີລັກສະນະຕັດສິນເຖິງຄຸນນະພາບໃນການເຄື່ອນໄຫວ ຂອງລັດແຫ່ງກົດໝາຍ. ດັ່ງນັ້ນ, ການໂຄສະນາເຜີຍແຜ່ກົດໝາຍ ເປັນວຽກໜຶ່ງທີ່ສຳຄັນ ເພື່ອຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ຄວາມສັກ ສິດຂອງກົດໝາຍ ກໍຄືຄວາມເຂັ້ມແຂງຂອງອຳນາດລັດ. ການສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ມີຄວາມຈຳເປັນທີ່ສຸດໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ເພາະສະຕິກົດໝາຍສູງຂຶ້ນເທົ່າໃດ ການລະເມີດກົດໝາຍ ກໍຍິ່ງຫຼຸດຜ່ອນລົງເທົ່ານັ້ນ. ດ້ວຍເຫດນີ້, ການສ້າງ ແລະ ປັບປຸງກົດໝາຍ ມັນຕິດພັນກັບການນຳເອົາກົດໝາຍເຂົ້າສູ່ຊີວິດສັງຄົມ, ເພີ່ມທະວີນິຕິທຳໃນທົ່ວສັງຄົມ, ເຊີດຊູສະຕິຕື່ນຕົວເຄົາລົບ ແລະ ປະຕິບັດກົດໝາຍໃຫ້ສູງຂຶ້ນ, ເຮັດໃຫ້ກົດໝາຍໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ມີຜົນສັກສິດ.

**3) ຄວາມສຳຄັນທາງດ້ານການພັດທະນາເສດຖະກິດ-ສັງຄົມ**

ການຫັນປ່ຽນຈາກການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍມະຕິຄຳສັ່ງ ມາຄຸ້ມຄອງດ້ວຍລັດຖະທຳມະນູນ ແລະ ກົດໝາຍ ເປັນສ່ວນໜຶ່ງທີ່ສຳຄັນ ຂອງແນວທາງປ່ຽນແປງໃໝ່ຢູ່ປະເທດເຮົາ. ເພື່ອເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍມີປະສິດທິຜົນສູງ ມັນຮຽກຮ້ອງໃຫ້ພົນລະເມືອງທຸກຄົນມີຄວາມຮັບຮູ້ ແລະ ເຂົ້າໃຈເນື້ອໃນຂອງກົດໝາຍໃນລະດັບອັນແນ່ນອນ. ດ້ວຍເຫດນີ້, ລັດຖະທຳມະນູນໄດ້ກຳນົດໃຫ້ ທຸກອົງການຈັດຕັ້ງຂອງພັກ, ຂອງລັດ ແລະ ສັງຄົມກໍຄືພະນັກງານ-ລັດຖະກອນທຸກຄົນເອົາໃຈໃສ່ເຄື່ອນໄຫວໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ພົນລະເມືອງຢ່າງເປັນປະຈຳ ໂດຍສະເພາະແລ້ວ ພາລະບົດບາດດັ່ງກ່າວ ໄດ້ມອບໃຫ້ກະຊວງຍຸຕິທຳ ເປັນໃຈກາງໃນການປະສານສົມທົບ.

ການສ້າງ ແລະ ການຍົກສູງສະຕິເຄົາລົບກົດໝາຍ ດ້ວຍວິທີການໂຄສະນາເຜີຍແຜ່ກົດໝາຍ ແລະ ການສະໜອງຂໍ້ມູນ-ຂ່າວສານກົດໝາຍໃຫ້ທົ່ວເຖິງ ຖືເປັນໜ້າທີ່ອັນຮີບດ່ວນ, ຈຳເປັນ ແລະ ເປັນການສ້າງເງື່ອນໄຂ ເພື່ອເອື້ອອຳນວຍໃຫ້ປະຊາຊົນໄດ້ເຂົ້າເຖິງກົດໝາຍ ແລະ ຄວາມຍຸຕິທຳ. ການເຜີຍແຜ່ຂໍ້ມູນ-ຂ່າວສານກ່ຽວກັບກົດໝາຍ ໂດຍສະເພາະແມ່ນກົດໝາຍທີ່ຕິດພັນກັບການດຳລົງຊີວິດປະຈຳວັນ, ການປົກປ້ອງສິດຜົນປະໂຫຍດ ແລະ ສົ່ງເສີມການປະຕິບັດສິດ ແລະ ພັນທະຂອງພົນລະເມືອງທຸກຄົນໃນສັງຄົມ ຈະເປັນເງື່ອນໄຂອັນຕົ້ນຕໍເຮັດໃຫ້ການລະເມີດ ແລະ ຝ່າຝືນກົດໝາຍຫຼຸດຜ່ອນລົງ. ພ້ອມກັນນັ້ນ, ການສົ່ງເສີມ ແລະ ການເອົາໃຈໃສ່ໃຫ້ປະຊາຊົນມີສ່ວນຮ່ວມໃນວຽກງານກົດໝາຍ ແລະ ຍຸຕິທຳ ໂດຍຜ່ານການໃຫ້ຄຳປຶກສາ ແລະ ການໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍ ເປັນຕົ້ນ ການແກ້ໄຂຄຳຮ້ອງທຸກ ຂອງປະຊາຊົນກໍເປັນວຽກງານ ແລະ ພັນທະຂອງລັດທີ່ຕ້ອງໄດ້ເອົາໃຈໃສ່ ເພື່ອຮັບປະກັນການປະຕິບັດສິດ, ໜ້າທີ່ ແລະ ພັນທະຂອງພົນລະເມືອງໃຫ້ຖືກຕ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ. ໂດຍເຫັນໄດ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ເປັນວຽກໜຶ່ງທີ່ກວ້າງຂວາງ ແລະ ກວມລວມສຳລັບທຸກຂະແໜງການຂອງລັດ, ກະຊວງຍຸຕິທຳຈຶ່ງໄດ້ດຳເນີນການສ້າງຕັ້ງຕາໜ່າງໂຄສະນາເຜີຍແຜ່ກົດໝາຍ ແຕ່ສູນກາງລົງ

ຮອດທ້ອງຖິ່ນ ແລະ ໄດ້ຈັດຕັ້ງການຝຶກອົບຮົມວຽກງານດັ່ງກ່າວໃຫ້ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງກັບວຽກງານນີ້ຢ່າງຕໍ່ເນື່ອງ.

ໃນຂະບວນວິວັດຂອງການເພີ່ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດກົດໝາຍນັ້ນ ຖືວ່າວຽກງານໂຄສະນາເຜີຍແຜ່ກົດໝາຍ ເປັນບັນຫາກົກ, ພວກເຮົາບໍ່ອາດຈະເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍຢູ່ໃນສັງຄົມມີຄວາມສັກສິດ ແລະ ຍຸຕິທໍາໄດ້ ຖ້າຫາກຄົນຢູ່ໃນສັງຄົມບໍ່ມີລະດັບຄວາມຮັບຮູ້ກົດໝາຍທີ່ແນ່ນອນ. ຜ່ານມາເຖິງແມ່ນວ່າພວກເຮົາໄດ້ເຮັດວຽກງານໂຄສະນເຜີຍແຜ່ກົດໝາຍໄດ້ດີ, ແຕ່ຍ້ອນຈຸດພິເສດ ແລະ ລະດັບແຕ່ລະດ້ານຂອງຄົນຢູ່ໃນສັງຄົມຂອງປະເທດເຮົາມີຄວາມແຕກໂຕນກັນ. ດັ່ງນັ້ນ, ພວກເຮົາຕ້ອງໄດ້ສືບຕໍ່ເຮັດວຽກງານນີ້ໃຫ້ດີກວ່າເກົ່າ ແລະ ຖ້າພວກເຮົາດໍາເນີນໄດ້ດີ ກໍຈະເຮັດໃຫ້ສະຕິກົດໝາຍຂອງສັງຄົມນັບມື້ສູງຂຶ້ນ ຊຶ່ງນີ້ແມ່ນບັນຫາສໍາຄັນຫຼາຍ, ພວກເຮົາຕ້ອງໂຄສະນາເຜີຍແຜ່ກົດໝາຍໃຫ້ສອດຄ່ອງກັບແຕ່ລະເປົ້າໝາຍ, ເຮັດຢ່າງເປັນປົກກະຕິ, ຕໍ່ເນື່ອງ, ການເຮັດຕ້ອງດໍາເນີນໄປດ້ວຍຫຼາຍຮູບຫຼາຍສີ, ນັບທັງພາຫະນະສື່ມວນຊົນ, ໂຄສະນາດ້ວຍປາກເປົ່າ, ດ້ວຍແຜ່ນພັບ, ເຮັດທາງກວ້າງ, ທາງເລິກ, ເປັນພາສາຊົນເຜົ່າ ແລະ ອື່ນໆ.

**4) ຄວາມສໍາຄັນຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ການໂຄສະນາເຜີຍແຜ່ກົດໝາຍ ຍັງມີຄວາມສໍາຄັນຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທັງແມ່ນໜ້າທີ່ຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເປັນພັນທະຂອງທຸກອົງການຈັດຕັ້ງ ແລະ ພົນລະເມືອງລາວທຸກຄົນ ໃນການປົກປັກຮັກສາຄວາມເປັນເອກະລາດ, ອໍານາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ, ປົກປັກຮັກສາຊີວິດ ແລະ ຊັບສິນຂອງປະຊາຊົນ, ຮັບປະກັນສະຖຽນລະພາບທາງ ດ້ານການເມືອງ ແລະ ຄວາມໝັ້ນຄົງຂອງລະບອບ ປະຊາທິປະໄຕ ປະຊາຊົນ.

**4. ຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ**

ຈຸດປະສົງທາງສັງຄົມຂອງການໂຄສະນາເຜີຍແຜ່ກົດໝາຍ ແມ່ນໜຶ່ງໃນບັນດາປັດໄຈປະກອບສ້າງ ເປັນໂຄງຮ່າງຂອງການໂຄສະນາເຜີຍແຜ່ກົດໝາຍ. ການກໍານົດຈຸດປະສົງທາງສັງຄົມຢ່າງຖືກຕ້ອງ ຈະຕ້ອງໃຫ້ບັນລຸຜົນໄດ້ ໃນຂະບວນວິວັດແຫ່ງການໂຄສະນາເຜີຍແຜ່ກົດໝາຍ ຊຶ່ງມີບົດບາດສໍາຄັນທາງດ້ານທິດສະດີ ແລະ ພຶດຕິກໍາ ເພາະວ່າບັນດາມາດຕະການ, ເນື້ອໃນ, ຮູບການ, ວິທີການຂອງການໂຄະສະນາເຜີຍແຜ່ກົດໝາຍ ສ່ວນໃຫຍ່ຈະຂຶ້ນກັບການກໍານົດ ບັນດາຈຸດປະສົງ ທາງສັງຄົມວ່າ ແມ່ນຢາກໃຫ້ໄດ້ອັນໃດ? ຊຶ່ງຈະຕ້ອງໄດ້ຕັ້ງຂຶ້ນກ່ອນ ໃນຂະບວນຂອງການໂຄສະນາເຜີຍແຜ່ກົດໝາຍ, **ຕົວຢ່າງ** ການໂຄສະນາເຜີຍແຜ່ຄວາມຮູ້ດ້ານກົດໝາຍ ແມ່ນຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ, ຖ້າຫາກຖືຄືແນວນັ້ນ ການໂຄສະນາເຜີຍແຜ່ກົດໝາຍ ຈະມີຄວາມເປັນເອກະພາບກັນກັບການສຶກສາອົບຮົມກົດໝາຍ ໂດຍສະເພາະ ແມ່ນຕໍ່ຮູບການສິດສອນ ແລະ ການຮໍ່າຮຽນກົດໝາຍ, ຖ້າຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ ຫາກເຮົາຕ້ອງການພຽງແຕ່ຢາກສ້າງຄວາມເຊື່ອໝັ້ນຕໍ່ກົດໝາຍເທົ່ານັ້ນ ກໍຈະມີການຈໍາກັດການເລືອກເຟັ້ນເອົາວິທີການ, ພາຫະນະກະທົບໃສ່ປັດໄຈຮູບການ ແລະ ແນວຄິດຂອງບຸກຄົນເທົ່ານັ້ນ, ຈະບໍ່ຕ້ອງການເຖິງພາຫະນະ ແລະ ວິທີການກະທົບອື່ນອີກ. ຖ້າຖືເອົາການສະກັດກັ້ນ ການລ່ວງລະເມີດກົດໝາຍແມ່ນຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ ແນ່ນອນວ່າ ຜູ້ເຮັດການໂຄສະນາເຜີຍແຜ່ກົດໝາຍ ແລະ ເປົ້າໝາຍຂອງໂຄສະນາເຜີຍແຜ່ກົດໝາຍ ຈະຖືກຈໍາກັດດ້ານຂອບເຂດ ແລະ ປະລິມານ, ບັນດາພາຫະນະ ແລະ ວິທີການໂຄສະນາເຜີຍແຜ່ກົດໝາຍ ກໍບໍ່ຕ້ອງການນໍາໃຊ້ຫຼາຍ. ເປັນອັນແນ່ນອນວ່າ ການກໍານົດຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍທີ່ຖືກຕ້ອງ, ຊັດເຈນ ຫຼື ດ້ານດຽວ, ຜິດພາດ ກໍຈະມີຜົນສະທ້ອນເຖິງຄຸນນະພາບດີ ຫຼື ບໍ່ດີຂອງການໂຄສະນາເຜີຍແຜ່, ການກໍານົດຮູບການ, ພາຫະນະ, ວິທີການ ແລະ ເນື້ອໃນຂອງການໂຄສະນາເຜີຍແຜ່ກົດໝາຍ.

ອີງໃສ່ເງື່ອນໄຂ ແລະ ສະພາບຄວາມເປັນຈິງຂອງປະເທດເຮົາ, ເພື່ອກຳນົດເນື້ອໃນ, ຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍໃຫ້ຖືກຕ້ອງ, ຊັດເຈນຕ້ອງເລັ່ງໃສ່ ສາມຈຸດປະສົງຕົ້ນຕໍດັ່ງນີ້:

**1) ເພື່ອສ້າງຄວາມຮັບຮູ້ດ້ານກົດໝາຍໃຫ້ແກ່ປະຊາຊົນ**

ອີງໃສ່ສະພາບຄວາມເປັນຈິງຂອງປະເທດເຮົາ, ເບິ່ງລວມແລ້ວເຫັນວ່າສັງຄົມເຮົາໃນປັດຈຸບັນຄວາມຮັບຮູ້ທາງດ້ານກົດໝາຍຍັງຈຳກັດ. ດັ່ງນັ້ນ, ຈຸດປະສົງດັ່ງກ່າວ ແມ່ນມີຄວາມສຳຄັນອັນດັບໜຶ່ງ ເພາະວ່າການຮັບຮູ້ເຂົ້າໃຈດີຕໍ່ກົດໝາຍຈະມີບົດບາດສຳຄັນ ເພື່ອຮັບປະກັນໃຫ້ສະຕິກົດໝາຍຂະຫຍາຍຕົວ, ຈິນຕະນາການນິຕິໄນ ແລະ ການກໍ່ສ້າງກົດໝາຍຢ່າງຂະຫຍັນຂັນແຂງໃນກະໂຕຄົນເຮົາ. ເພາະສະນັ້ນ ທ່ານ ເລນິນ ຈຶ່ງຖືວ່າ "ນັ້ນແມ່ນເງື່ອນໄຈອັນຈຳເປັນ ເພື່ອຜູກພັນກັບການເມືອງ ແລະ ວັດທະນະທຳ, ແມ່ນພື້ນຖານຂອງຄວາມຂະຫຍັນຂັນແຂງດ້ານກົດໝາຍຂອງຊາວຜູ້ອອກແຮງງານ. ເພິ່ນຍັງຊີ້ແຈງອີກວ່າ  ຄວາມຮັບຮູ້, ຄວາມເຂົ້າໃຈ  ກົດໝາຍ ແມ່ນເງື່ອນໄຂອັນຈຳເປັນ , ຖ້າຂາດມັນແມ່ນບໍ່ຕ້ອງເວົ້າເຖິງການເມືອງ, ຄົນກົກໜັງສືຢູ່ນອກການເມືອງ[1]".  ສະນັ້ນ, ກ່ອນຈະເວົ້າເຖິງການເປີດກວ້າງ ແລະ ຍົກສູງຄວາມຮູ້ດ້ານກົດໝາຍ ຕ້ອງຜ່ານການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ກົດໝາຍ ເພື່ອປະກອບຄວາມຮູ້ພື້ນຖານ ກ່ຽວກັບກົດໝາຍໃຫ້ຄົນເຮົາ, ນີ້ຄືຄຸນຄ່າທາງສັງຄົມຂອງກົດໝາຍ ແລະ ພາລະບົດບາດດັດປັບຂອງມັນ.

ຄວາມຮູ້ທາງດ້ານກົດໝາຍຍິ່ງຄົບຖ້ວນສົມບູນເທົ່າໃດ ກໍຈະເຮັດໃຫ້ສະຕິກົດໝາຍແຂງແຮງຂຶ້ນເທົ່ານັ້ນ ເພາະວ່າສະຕິກົດໝາຍໄດ້ຊຸບຫຼໍ່ບົນພື້ນຖານຄວາມສຳນຶກ, ຄວາມເຂົ້າໃຈ ແລະ ບັນດາມາດຕະການກ່ຽວກັບກົດໝາຍ. ຖ້າຂາດສິ່ງດັ່ງກ່າວນັ້ນ ບໍ່ສາມາດເຮັດໃຫ້ແນວຄິດດ້ານກົດໝາຍຄົງຕົວໄດ້. ທ່ານ ອັງແກນ ໄດ້ເນັ້ນໜັກເຖິງຄວາມໝາຍຂອງຄວາມຮູ້ດ້ານການກໍ່ສ້າງຄວາມເຊື່ອໝັ້ນວ່າ "ຂ້ອຍຈຳເປັນຕ້ອງມີຄວາມຮູ້ອັນໜຶ່ງທີ່ຄົບຖ້ວນ ເພື່ອສ້າງຕົນເອງໃຫ້ມີຄວາມໄວ້ເນື້ອເຊື່ອໃຈ, ເຖິງວິນິດໄສແນວໃດ ກໍຕ້ອງກຳແໜ້ນມັນ. ສະນັ້ນ, ພະລັງຂອງຄວາມສະດຸ້ງໄດ້ກຳນົດດ້ວຍລະບົບຈະບັນຈຸໄດ້ຂອງຈຸດປະສົງ ແຫ່ງຄວາມຮັບຮູ້ ໃນຂະບວນວິວັດ ຂອງການໂຄສະນາເຜີຍແຜ່. ຄວາມຮູ້ດ້ານກົດໝາຍ ພາໃຫ້ເກີດພື້ນຖານຂອງການກຳນົດທິດທາງແຫ່ງຄວາມເຊື່ອໝັ້ນ, ຄວາມສະຫງົບເຂົ້າໃນບັນດາຄຸນຄ່າຂອງກົດໝາຍ, ຍິ່ງໄປກວ່ານັ້ນ ຄວາມຮູ້ດ້ານກົດໝາຍ ຊ່ວຍໃຫ້ຄົນເຮົາມີການຈັດຕັ້ງຢ່າງມີສະຕິກ່ຽວກັບການປະພຶດຂອງຕົນ ແລະ ກວດກາຕົນເອງກ່ຽວກັບການປະພຶດ, ນັບແຕ່ທັດສະນະ, ມາດຕະຖານດ້ານກົດໝາຍ[2]."

ຕ້ອງເຂົ້າໃຈວ່າ ຄວາມຮູ້ດ້ານກົດໝາຍ ບໍ່ແມ່ນຄວາມຮັບຮູ້ແບບງ່າຍດາຍ, ຈຳນວນໜຶ່ງຂອງຂໍ້ກຳນົດກົດໝາຍໃດໜຶ່ງເທົ່ານັ້ນ, ມັນແມ່ນຄວາມຮັບຮູ້ຢ່າງເປັນລະບົບ ຊຶ່ງມີການຕຶກຕອງທີ່ຮອບຄອບກ່ຽວກັບເນື້ອໃນ, ຄວາມໝາຍຂອງກົດໝາຍ, ຮູ້ຕີລາຄາຄວາມເຊື່ອໝັ້ນຕໍ່ບັນດາເຫດການດ້ານກົດໝາຍ ກັບການປະພຶດນີ້ ຫຼື ການປະພຶດອື່ນ ວ່າມັນ ເໝາະສົມ ຫຼື ບໍ່ເໝາະສົມ, ສົມເຫດສົມຜົນ ຫຼື ບໍ່ສົມເຫດສົມຜົນ. ຍ້ອນແນວນັ້ນ, ການເປີດກວ້າງຄວາມຮູ້ ແລະ ຍົກສູງລະດັບຄວາມຮູ້ດ້ານກົດໝາຍເທື່ອລະກ້າວ ແມ່ນປັດໄຈສຳຄັນທີ່ສຸດ ຂອງຈຸດປະສົງແຫ່ງຄວາມຮັບຮູ້.

ສັງລວມແລ້ວ, ກົດໝາຍທີ່ລັດວາງອອກໃນແຕ່ລະໄລຍະ ບໍ່ແມ່ນວ່າເວລາໃດທຸກຄົນໃນສັງຄົມກໍຈະຮັບຮູ້, ຊອກຮູ້, ເຫັນດີເຫັນພ້ອມ, ສະໜັບສະໜູນ ແລະ ປະຕິບັດຢ່າງເຂັ້ມງວດ ເຖິງແມ່ນວ່າກົດໝາຍນັ້ນ ສ່ອງແສງເຖິງເຈດຈຳນົງ ແລະ ຄວາມມຸ່ງມາດປາດຖະໜາ ຂອງປະຊາຊົນສ່ວນຫຼາຍຢູ່ໃນສັງຄົມກໍຕາມ. ນິຕິກຳຕ່າງໆເຖິງວ່າຈະມີເນື້ອໃນດີປານໃດກໍຕາມ ຖ້າປະຊາຊົນບໍ່ຮູ້ກໍຈະເຮັດໃຫ້ນິຕິກຳເຫຼົ່ານັ້ນ ເປັນພຽງເຈ້ຍຂາວທີ່ບໍ່ມີຄວາມໝາຍຫຍັງ. ໃນຕົວຈິງອາດຈະມີຄົນຈຳນວນໜຶ່ງ ໃຫ້ຄວາມສົນໃຈ ຊອກຮູ້ກົດໝາຍໂດຍເລີ່ມຈາກຄວາມຕ້ອງການໃນການຮ່ຳຮຽນ

[1]ຄັດຈາກ ປຶ້ມຄວາມຮູ້ກ່ຽວກັບການສຶກສາອົບຮົມກົດໝາຍພາສາຫວຽດນາມ ໜ້າ 27 ພິມປີ 1995 ສຳນັກພິມສະຖາບັນການເມືອງແຫ່ງຊາດຫວຽດນາມ

[2]ຄັດຈາກຄວາມຮູ້ກ່ຽວກັບການສຶກສາອົບຮົມກົດໝາຍພາສາຫວຽດນາມ ໜ້າ 28 ພິມປີ 1995 ສຳນັກພິມສະຖາບັນການເມືອງແຫ່ງຊາດຫວຽດນາມ

,ການຄົ້ນຄວ້າ ຫຼື ເພື່ອຮັບໃຊ້ການຜະລິດ, ທຸລະກິດ ຂອງເຂົາເຈົ້າເທົ່ານັ້ນ, ຄົນເຫຼົ່ານີ້ ມັກຈະຕິດຕາມຢູ່ເລື້ອຍໆ ບັນດານິຕິກຳທີ່ອອກໃໝ່ ເພື່ອຮັບໃຊ້ໂດຍກົງໃຫ້ແກ່ວຽກງານຂອງຕົນ, ແຕ່ເປົ້າໝາຍຄືແນວນີ້ ແມ່ນຈຳນວນບໍ່ຫຼາຍ. ໃນເງື່ອນໄຂທີ່ລະດັບການສຶກສາຂອງປະຊາຊົນຍັງບໍ່ທັນສູງ, ສະພາບເສດຖະກິດ, ຊີວິດການເປັນຢູ່ ຂອງປະຊາຊົນສ່ວນຫຼາຍຍັງພົບຄວາມຫຍຸ້ງຍາກ, ສະນັ້ນເຂົາເຈົ້າຍັງບໍ່ມີໂອກາດ ແລະ ເງື່ອນໄຂທີ່ຈະເຂົ້າເຖິງກົດໝາຍ.

ການໂຄສະນາເຜີຍແຜ່ກົດໝາຍ ເປັນພາຫະນະຖ່າຍທອດຂໍ້ມູນຂ່າວສານ, ບັນດາຄວາມຮຽກຮ້ອງຕ້ອງການເນື້ອໃນ ແລະ ຂໍ້ກຳນົດຕ່າງໆຂອງກົດໝາຍມາສູ່ປະຊາຊົນ, ຊ່ວຍປະຊາຊົນຮັບຮູ້, ເຂົ້າໃຈກົດໝາຍໂດຍບໍ່ເສຍເວລາໄປຊອກຮຽນ ຫຼື ບໍ່ເສຍເວລາຮຽນດ້ວຍຕົນເອງ. ນີ້ເປັນພາຫະນະຊ່ວຍໜູນທີ່ຕັ້ງໜ້າ ເພື່ອຍົກສູງຄວາມຮັບຮູ້, ຄວາມເຂົ້າໃຈກົດໝາຍໃຫ້ແກ່ປະຊາຊົນ.

**2) ເພື່ອສ້າງຄວາມເຊື່ອໝັ້ນຕໍ່ກົດໝາຍ**

ການສ້າງຄວາມເຊື່ອໝັ້ນຕໍ່ກົດໝາຍ ມີຄວາມສຳຄັນທີ່ສຸດ ຍ້ອນວ່າມີຄວາມຮັບຮູ້ດ້ານກົດໝາຍ ແຕ່ຂາດສະຕິເຄົາລົບແລ້ວ ກໍຈະຄາດຄະເນບໍ່ໄດ້ ແລະ ຈະບໍ່ຮັບປະກັນເຖິງການກະທຳທີ່ຖືກຕ້ອງຕາມກົດໝາຍ, ບໍ່ໜັກແໜ້ນຕໍ່ໜ້າທີ່ວຽກງານ. ໃນຂະບວນວິວັດແຫ່ງການປະຕິບັດບັນດາຂໍ້ກຳນົດກົດໝາຍນັ້ນ ແມ່ນການກະທົບຊຶ່ງກັນ ແລະ ກັນ ຂອງບັນດາຄວາມຮຽກຮ້ອງຕ້ອງການ ທີ່ສະແດງອອກໃນກົດໝາຍ ກັບສະຕິແຕ່ລະຄົນ ໃນອົງປະກອບດ້ານຈິດຕະສາດຂອງສະຕິບຸກຄົນ, ມີປັດໄຈໜຶ່ງທີ່ສຳຄັນທີ່ສຸດນັ້ນແມ່ນຄວາມເຊື່ອໝັ້ນ, ບັນດານັກຈິດຕະສາດຊີ້ບອກວ່າຄົນເຮົາຖ້າຂາດຄວາມເຊື່ອໝັ້ນ ແມ່ນແຕ່ການກະທຳຂອງເຂົາມັກຈະຜິດເຂວອອກຈາກບັນດາມາດຕະຖານສັງຄົມ. ໃນການປະຕິບັດກົດໝາຍຕົວຈິງກໍໄດ້ຊີ້ບອກຢ່າງຖືກຕ້ອງໃນການວິນິດໄສບັນຫານີ້. ຖ້າບຸກຄົນໃດໜຶ່ງຂາດຄວາມເຊື່ອໝັ້ນຕໍ່ກົດໝາຍ ມັກຈະເຫັນວ່າຜູ້ນັ້ນ ມີການປະພຶດພົກປົ້ນອອກຈາກມາດຕະຖານກົດໝາຍ. ຄວາມເຊື່ອໝັ້ນໜັກແໜ້ນຕໍ່ກົດໝາຍ ແມ່ນພື້ນຖານຂອງການກໍ່ສ້າງການປະພຶດທີ່ຖືກຕ້ອງ, ການສ້າງຄວາມເຊື່ອໝັ້ນຢ່າງໜັກແໜ້ນຂອງພົນລະເມືອງຕໍ່ຄວາມຈຳເປັນໃນການເຄົາລົບຕາມບັນດາຂໍ້ກຳນົດກົດໝາຍນັ້ນ ບໍ່ສະເພາະແຕ່ຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ, ຫາກຍັງເປັນປັດໄຈໃນໂຄງສ້າງ ຂອງການສຶກສາອົບຮົມກົດໝາຍອີກດ້ວຍ.

ພົນລະເມືອງຈະປະຕິບັດກົດໝາຍຢ່າງເຂັ້ມງວດ ກໍຕໍ່ເມື່ອເຂົາເຈົ້າເຊື່ອໝັ້ນຕໍ່ຂໍ້ກຳນົດຕ່າງໆຂອງກົດໝາຍ.ກົດໝາຍວາງອອກ ແມ່ນເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນ, ຮັບປະກັນຜົນປະໂຫຍດລວມ ຂອງວົງຄະນະຍາດແຫ່ງຊາດ, ຮັບປະກັນຄວາມຍຸຕິທຳ ແລະ ສິດປະຊາທິປະໄຕຢູ່ໃນສັງຄົມ. ເວລາໃດປະຊາຊົນບັນດາເຜົ່າຫາກຮັບຮູ້ ແລະ ເຂົ້າໃຈກົດໝາຍຢ່າງຖືກຕ້ອງ ແລະ ຄົບຖ້ວນຄືແນວນີ້ ເວລານັ້ນ ແມ່ນບໍ່ຈຳເປັນຈະນຳໃຊ້ມາດຕະການບັງຄັບ, ທຸກຄົນຈະເຄົາລົບ ແລະ ປະຕິບັດຕາມກົດໝາຍດ້ວຍຄວາມຕື່ນຕົວ. ການສ້າງຄວາມເຊື່ອໝັ້ນຂອງແຕ່ລະຄົນ ແລະ ທັງໝົດວົງຄະນະຍາດແຫ່ງຊາດ ຕໍ່ກົດໝາຍ ມັນຮຽກຮ້ອງໃຫ້ມີການປະສານສົມທົບຫຼາຍປັດໄຈ ແລະ ໜຶ່ງໃນບັນດາປັດໄຈທີ່ມີບົດບາດສຳຄັນ ແມ່ນການໂຄສະນາ ເຜີຍແຜ່, ສຶກສາອົບຮົມກົດໝາຍ ແມ່ນເພື່ອໃຫ້ທຸກຄົນມີຄວາມຮັບຮູ້ ກ່ຽວກັບກົດໝາຍ, ເຂົ້າໃຈກ່ຽວກັບຂະບວນການປະຕິບັດ ແລະ ນຳໃຊ້ກົດໝາຍ, ໂຄສະນາກ່ຽວກັບດ້ານສະດວກ ແລະ ຄວາມຫຍຸ້ງຍາກຂອງການປະຕິບັດ ແລະ ນຳໃຊ້ກົດໝາຍ ລວມທັງດ້ານດີທີ່ຕັ້ງໜ້າ ແລະ ຂໍ້ຈຳກັດຂອງຂະບວນການດັດສົມກົດໝາຍ.

ກົດໝາຍ ກໍຄືປາກົດການອື່ນໆຢູ່ໃນສັງຄົມ ເວລາໃດກໍຕ້ອງມີສອງດ້ານຕິດພັນກັນ, ບໍ່ແມ່ນວ່າຍາມໃດກໍເຮັດໃຫ້ມີຄວາມເພິ່ງພໍໃຈໝົດ ຫຼື ສ່ອງແສງຢ່າງຄົບຖ້ວນເຖິງເຈດຈຳນົງ, ຄວາມມຸ່ງມາດປາຖະໜາ ຂອງໝົດທຸກຄົນໃນສັງຄົມ. ຂະບວນການດັດປັບຂອງກົດໝາຍ ຈະຖືເອົາຜົນປະໂຫຍດຂອງປະຊາຊົນສ່ວນຫຼວງຫຼາຍຢູ່ໃນສັງຄົມເປັນມາດຕະຖານວັດແທກ, ຍ້ອນແນວນັ້ນ ຈະມີຄົນຈຳນວນໜ້ອຍໜຶ່ງບໍ່ເພິ່ງພໍໃຈ. ບັນດາປັດໄຈ ຫຼື ວ່າຂໍ້ຈຳກັດ ແລະ ດ້ານລົບ ຂອງຂໍ້ກຳນົດກົດໝາຍຕ່າງໆ ຍິ່ງເຮັດໃຫ້ມີຄວາມຈຳເປັນຈະຕ້ອງໄດ້ເພີ່ມທະວີວຽກງານໂຄສະນາເຜີຍແຜ່,

ສຶກສາອົບຮົມກົດໝາຍ ເພື່ອໃຫ້ທຸກຄົນເຂົ້າໃຈກົດໝາຍຢ່າງຖືກຕ້ອງ ແລະ ໃຫ້ການສະໜັບສະໜູນ. ມີແຕ່ເຮັດແນວນີ້ ຈຶ່ງຈະສ້າງໄດ້ຄວາມເຊື່ອໝັ້ນຂອງປະຊາຊົນສ່ວນຫຼວງຫຼາຍຢູ່ໃນສັງຄົມຕໍ່ກົດໝາຍ.

**3) ເພື່ອສ້າງການປະພຶດທີ່ຕັ້ງໜ້າຕໍ່ກົດໝາຍ**

ກ່ອນອື່ນຕ້ອງຢືນຢັນວ່າ ໃນບັນດາຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ, ການສ້າງການປະພຶດທີ່ຕັ້ງໜ້າຕໍ່ກົດໝາຍ ມີຄວາມສຳຄັນເປັນພິເສດ ເພາະວ່າໝາກຜົນສຸດທ້າຍຂອງການໂຄສະນາ ເຜີຍແຜ່ກົດໝາຍ ຕ້ອງສະແດງອອກໃນການປະພຶດ ການເຄົາລົບ ຂອງຄົນເຮົາ. ບັນດາຈຸດປະສົງກ່ຽວກັບຄວາມຮູ້ ແລະ ສະຕິທີ່ໄດ້ກ່າວມາຂ້າງເທິງນີ້ແມ່ນເພື່ອຮັບໃຊ້ໃຫ້ແກ່ຈຸດປະສົງແຫ່ງການປະພຶດທີ່ຕັ້ງໜ້າຕໍ່ກົດໝາຍ.

ເຖິງວ່າມີຫຼາຍປັດໄຈກະທົບເຖິງການສ້າງການປະພຶດຂອງຄົນເຮົາ, ແຕ່ແນ່ນອນວ່າໃນຈຳນວນປັດໄຈກະທົບເຖິງການສ້າງການປະພຶດທີ່ຖືກຕ້ອງນັ້ນ ແມ່ນການເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍ, ເພາະສະນັ້ນ ການປະກອບຄວາມຮູ້, ການສຶກສາອົບຮົມຄວາມເຊື່ອໝັ້ນຢ່າງເລິກເຊິ່ງຕໍ່ຄວາມຈຳເປັນຈະຕ້ອງເຄົາລົບດ້ວຍຄວາມຕື່ນຕົວ ຕໍ່ຂໍ້ກຳນົດຂອງກົດໝາຍ ແມ່ນປັດໄຈສຳຄັນແນໃສ່ສ້າງການປະພຶດທີ່ຖືກຕ້ອງ. ບັນດາແນວຄິດຈິດໃຈດ້ານຄວາມຍຸຕິທຳ, ຄວາມສະເໝີພາບ, ສະຕິຄວາມຮັບຜິດຊອບ ແລະ ບໍ່ອະນຸໂລມຜ່ອນຜັນ ຕໍ່ບັນດາການກະທຳທີ່ຝ່າຝືນກົດໝາຍ ແມ່ນບັນດາປັດໄຈຈິດຕະສາດ, ແນວຄິດທີ່ບໍ່ສາມາດແຍກອອກຈາກການສ້າງການປະພຶດທີ່ຖືກຕ້ອງ, ຕື່ນຕົວ ແລະ ຫ້າວຫັນ. ດັ່ງນັ້ນ, ອີງໃສ່ບັນດາຈິດໃຈອັນເລັ່ງດ່ວນ ແລະ ຄວາມເຊື່ອໝັ້ນອັນໜັກແໜ້ນຕໍ່ກົດໝາຍຂອງຄົນເຮົານັ້ນ ຈຶ່ງຈະສ້າງການປະພຶດທີ່ຖືກຕ້ອງ, ຕື່ນຕົວ ແລະ ຕັ້ງໜ້າດ້ານກົດໝາຍ. ມີແຕ່ອີງໃສ່ຂະບວນວິວັດແຫ່ງການໂຄສະນາເຜີຍແຜ່ດ້ວຍຫຼາຍວິທີການ, ຫຼາຍຮູບການ ແລະ ພາຫະນະ ເພື່ອໃຫ້ທຸກຄົນຮັບຮູ້ດ້ວຍວິທີການໃດໜຶ່ງທີ່ເລິກເຊິ່ງ ກ່ຽວກັບຄວາມຈຳເປັນ, ຄວາມສົມເຫດສົມຜົນ ແລະ ຜົນປະໂຫຍດຂອງບັນດາຂໍ້ກຳນົດຂອງກົດໝາຍ ຕໍ່ກັບສັງຄົມເວົ້າລວມ ກໍຄືຕໍ່ສະມາຊິກຂອງສັງຄົມ ຈຶ່ງຈະສ້າງການປະພຶດທີ່ຕັ້ງໜ້າຕໍ່ກົດໝາຍ.

ສະຕິກົດໝາຍ ຂອງປະຊາຊົນເກີດຂຶ້ນຈາກສອງປັດໄຈຄື: ຄວາມຮູ້ດ້ານກົດໝາຍ ແລະ ຈິດໃຈທາງດ້ານກົດໝາຍ. ຄວາມຮູ້ດ້ານກົດໝາຍ ແມ່ນຄວາມເຂົ້າໃຈກ່ຽວກັບກົດໝາຍຂອງເປົ້າໝາຍ ໂດຍຜ່ານການຮຽນ, ການຄົ້ນຄວ້າ, ການຊອກຮູ້ກົດໝາຍ, ຜ່ານຂະບວນວຽກງານຕົວຈິງ ທີ່ສະສົມໄດ້. ສ່ວນຈິດໃຈທາງດ້ານກົດໝາຍ ແມ່ນຄວາມຮັກ, ຄວາມເຄົາລົບ, ຄວາມເປັນເຈົ້າການ ຂອງເຈົ້າກຳ ຫຼື ຂອງເປົ້າໝາຍ ໃນເວລາປະຕິບັດ ແລະ ນຳໃຊ້ກົດໝາຍ, ເຂົາເຈົ້າອາດຈະເຫັນດີເຫັນພ້ອມ, ຕື່ນຕົວເຄົາລົບ ຫຼື ສະໜັບສະໜູນຕໍ່ພຶດຕິກຳທີ່ຖືກຕ້ອງຕາມກົດໝາຍ ແລະ ຕຳນິວິຈານຕໍ່ພຶດຕິກຳທີ່ເປັນການລະເມີດ ຫຼື ຝ່າຝືນກົດໝາຍ.

ສະຕິຕື່ນຕົວປະຕິບັດກົດໝາຍຂອງປະຊາຊົນ ຈະໄດ້ຮັບການຍົກສູງໂດຍຜ່ານການໂຄສະນາເຜີຍແຜ່, ສຶກສາອົບຮົມກົດໝາຍ ໃຫ້ເຂົາເຈົ້າຢ່າງເປັນປົກກະຕິ, ທັນເວລາ ແລະ ມີລັກສະນະດຶງດູດສູງ. ການໂຄສະນາເຜີຍແຜ່, ສຶກສາອົບຮົມກົດໝາຍ ບໍ່ໝາຍຄວາມວ່າມີແຕ່ໂຄສະນາບັນດານິຕິກຳທີ່ມີຜົນບັງຄັບໃຊ້ໃນປະຈຸບັນພຽງຢ່າງດຽວ, ມັນຍັງກວມເອົາການຕຳນິວິຈານພຶດຕິກຳທີ່ລະເມີດກົດໝາຍ ແລະ ລະບຽບການ, ເຫັນດີເຫັນພ້ອມ, ສະໜັບສະໜູນພຶດຕິກຳທີ່ຖືກກົດໝາຍ.

**References:**


1. ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ ຂອງ ສປປ ລາວ ປີ 2022;
2. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
3. ປຶ້ມໂຄສະນາເຜີຍແຜ່ນິຕິກຳ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2020;
4. ປຶ້ມຄວາມຮູ້ກ່ຽວກັບການສຶກສາອົບຮົມກົດໝາຍພາສາຫວຽດນາມ, ຈັດພິມໂດຍ ສຳນັກພິມສະຖາບັນການເມືອງແຫ່ງຊາດຫວຽດນາມ, ປີ 1995.